ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2156/ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 19 OCT 2015

# ຄຳສັ່ງແນະນຳເພີ່ມເຕີມ

ເຖິງ: ທ່ານ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ຜະລິດຕະພັນໄມ້ເຄິ່ງສຳເລັດຮູບທີ່ສາມາດສົ່ງອອກໄປຕ່າງປະເທດໄດ້.

- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 790/ຫລບ.ກລຂ, ລົງວັນທີ 21 ພຶດສະພາ2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 1360/ຫລບ.ກສສ, ລົງວັນທີ 18 ສິງຫາ 2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 1732/ຫລບ.ກສສ, ລົງວັນທີ 16 ຕຸລາ 2015.
- ອີງຕາມ ຂໍ້ຕົກລົງ ເລກທີ 2005/ອຄ.ກອທ, ລົງວັນທີ 28 ກັນຍາ 2015 ວ່າດ້ວຍຜະລິດຕະພັນໄມ້
- ອີງຕາມຄຳສັ່ງແນະນຳ ເລກທີ 1812/ອຄ.ກຂອ, ລົງວັນທີ 04 ກັນຍາ 2015

ເພື່ອຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດການສົ່ງອອກຜະລິດຕະພັນໄມ້ ແລະ ອີງໃສ່ຄວາມສາມາດຕົວຈິງໃນການຜະລິດຂອງບັນດາໂຮງງານປຸງແຕ່ງໄມ້ພາຍໃນປະເທດ

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳສັ່ງແນະນຳເພີ່ມເຕີມ ດັ່ງນີ້:

1. ອະນຸຍາດໃຫ້ສົ່ງອອກ ຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ໄດ້ລະບຸໄວ້ໃນຕາຕະລາງຊ້ອນທ້າຍ 2 ຂອງ ຂໍ້ຕົກລົງສະບັບເລກທີ 2005/ອຄ.ກອທ, ລົງວັນທີ 28 ກັນຍາ 2015 ວ່າດ້ວຍຜະລິດຕະພັນໄມ້;
2. ມອບໃຫ້ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ພິຈາລະນາອະນຸຍາດການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ທີ່ໄດ້ກ່າວມາໃນຂໍ້ 1 ຂ້າງເທິງ; ຍົກເວັ້ນ ໄມ້ເສົາໂຊ ໃຫ້ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບຂະແໜງການກ່ຽວຂ້ອງ ກວດກາແຫຼ່ງທີ່ມາຂອງໄມ້ ແລ້ວລາຍງານໃຫ້ ກະຊວງ ອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ເປັນຜູ້ພິຈາລະນາ.
3. ຄຳສັ່ງແນະນຳເພີ່ມເຕີມສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ນ ເຂັມມະນີ ພົນເສນາ

ບ່ອນສົ່ງ:

| | |
|---|---|
| - ຫ້ອງວ່າການລັດຖະບານ | "ເພື່ອຊາບ" |
| - ອົງການກວດກາລັດຖະບານ | "ເພື່ອຊາບ" |
| - ກະຊວງກະສິກຳ ແລະ ປ່າໄມ້ | "ເພື່ອຊາບ" |
| - ກະຊວງການເງິນ | "ເພື່ອຊາບ" |
| - ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ | "ເພື່ອຊາບ" |